**ผนวก ง**

**ແຈ້ງຂ່າວຮ່ວມ**

**ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ແລະ ສາທາລະນະລັດ ປະຊາຊົນຈີນ**

**(แจ้งข่าวร่วมระหว่างลาวกับจีน เนื่องในโอกาสที่**

**ท่านจูมมาลี ไซยาสอน ประธานประเทศลาวเยือนจีน**

**วันที่ 27 มิถุนายน 2 กรกฎาคม 2006)**

ນະຄອນຫຼວງປັກກິ່ງ, ວັນທີ 30 ມິຖຸນາ 2006

1/. ໂດຍຕອບສະໜອງຕາມການເຊື້ອເຊີນຂອງທ່ານຮູ ຈິນທາວ, ເລຂາທິການໃຫຍ່ຄະນະກຳມະການ ສູນກາງພັກກອມມູນິດຈີນ, ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາຊົນຈີນ, ທ່ານ ຈູມມະລີ ໄຊຍະສອນ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ, ປະທານປະເທດ ແຫ່ງສາທາລະນະ ລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ດຳ ເນີນການຢ້ຽມຢາມທາງລັດຖະກິດ ຕໍ່ ສາທາລະນະລັດ ປະຊາຊົນຈີນ ແຕ່ວັນທີ 27 ມິຖຸນາ ເຖິງ ວັນທີ 02 ກໍລະກົດ 2006.

ໄລຍະຂອງການຢ້ຽມຢາມ, ທ່ານ ຮູ ຈິນທາວ, ເລຂາທິການໃຫຍ່ພັກກອມມູນິດຈີນ, ປະທານປະເທດແຫ່ງສປ ຈີນ ແລະ ທ່ານ ຈູມມະລີ ໄຊຍະສອນ,ເລຂາທິການໃຫຍ່ພັກປະຊາຊົນ ປະຕິວັດລາວ, ປະທານປະ ເທດ ແຫ່ງ ສປປ ລາວ ໄດ້ດຳເນີນການພົບປະເຈລະຈາທາງການ ນຳກັນ, ທ່ານ ອູ ປັງກົວ, ປະທານຄະນະປະຈຳ ສະພາຜູ້ແທນປະຊາຊົນແຫ່ງຊາດຈີນ, ທ່ານ ເວີນ ເຈຍປາວ, ນາຍົກລັດຖະມົນຕີ ແຫ່ງ ສປ ຈີນ ແລະ ທ່ານ ເຊິງ ຊິ້ງຫົງ, ຮອງປະທານປະເທດ ແຫ່ງ ສປ ຈີນ ຕ່າງກໍ່ໄດ້ພົບປະກັບ ທ່ານ ຈູມມະລີ ໄຊຍະສອນ, ເລຂາທິການ ໃຫຍ່, ປະທານ ປະເທດ ແຫ່ງ ສປປ ລາວ. ທັງສອງຝ່າຍໄດ້ແລກປ່ຽນຄວາມຄິດຄວາມເຫັນນຳກັນຢ່າງເລິກເຊິ່ງ ກ່ຽວກັບ ບັນຫາການພົວພັນ ລະຫວ່າງ ສອງພັກ, ສອງລັດ ແລະ ບັນຫາສາກົນ ແລະ ພາກພື້ນ ທີ່ທີ່ຄວາມສົນ ໃຈຮ່ວມກັນ, ພ້ອມທັງໄດ້ບັນລຸຄວາມເປັນເອກະພາບນຳກັນຢ່າງກວ້າງຂວາງ.

2/. ທັງສອງຝ່າຍ ເຫັນພ້ອມນຳກັນວ່າ, ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ລະຫວ່າງ ລາວ ແລະ ຈີນ ທີ່ສ້າງຂຶ້ນໂດຍຜູ້ນຳລຸ້ນອາວຸໂສນັ້ນ ແມ່ນຊັບສົມບັດທີ່ລ້ຳຄ່າ ຂອງສອງພັກ, ສອງລັດ ແລະປະຊາຊົນສອງຊາດ ລາວແລະ ຈີນ. ທັງສອງຝ່າຍເຫັນເປັນເອກະພາບນຳກັນວ່າ, “ຖະແຫຼງການຮ່ວມກ່ຽວກັບ ການຮ່ວມມືທະວິ ພາຄີ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ປະຊາຊົນຈີນ ” ທີ່ໄດ້ ປະກາດອອກ ໃນວັນທີ 12 ພະຈິກ 2000 ນັ້ນ ໄດ້ກຳນົດທິດຂະຫຍາຍຕົວໃນໄລຍະໃໝ່ ຂອງການພົວພັນ ລະຫວ່າງ ສອງພັກ, ສອງລັດ ອັນມີຄວາມໝາຍສຳຄັນຍິ່ງທາງດ້ານປະຫວັດສາດ ແລະ ປະຈຸບັນ. ທັງສອງຝ່າຍ ຢືນຢັນວ່າ ຈະພ້ອມກັນອອກແຮງຊຸກຍູ້ໃຫ້ສາຍພົວພັນຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ລາວ ແລະ ຈີນ ໃຫ້ຂະຫຍາຍຕົວກ້າວໄປໜ້າຢ່າງບໍ່ຢຸດຢັ້ງ, ບົນພື້ນຖານຫຼັກການ 5 ປະການແຫ່ງການຢູ່ຮ່ວມກັນໂດຍສັນຕິ, ອີງຕາມທິດ “ໝັ້ນຄົງຍາວນານ, ມິດຕະພາບຖານບ້ານໃກ້ເຮືອນຄຽງ, ໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະກັນ ແລະ ຮ່ວມມື

ຮອບດ້ານ ". ລາວ ແລະ ຈີນ ຈະເປັນປະເທດບ້ານໃກ້ເຮືອນຄຽງທີ່ດີ, ເພື່ອນມິດທີ່ດີ, ສະຫາຍທີ່ດີ ແລະ ຄູ່ຮ່ວມມືທີ່ດີ ຕະຫຼອດໄປ.

3/. ທັງສອງຝ່າຍເປັນເອກະພາບນຳກັນວ່າ, ການຮັກສາການຕິດຕໍ່ພົວພັນທີ່ສະໜິດແໜ້ນ ລະຫວ່າງການນຳຂັ້ນສູງ ຂອງທັງສອງພັກ, ສອງລັດ ລາວ ແລະ ຈີນ ແມ່ນມີບົດບາດສຳຄັນ ແລະ ນຳໜ້າເພື່ອຊຸກຍູ້ການພົວພັນລະຫວ່າງສອງຝ່າຍ ໃຫ້ຂະຫຍາຍຕົວກ້າວໄປໜ້າຢ່າງ ບໍ່ຢຸດຢັ້ງ. ທັງສອງຝ່າຍຢືນຢັນວ່າ, ຈະສືບຕໍ່ຮັກສາ ການພົບປະເປັນປະຈຳ ລະຫວ່າງຜູ້ນຳຂອງ ສອງພັກ, ສອງລັດ ລາວ ແລະຈີນ, ເພີ່ມທະວີການແລກປ່ຽນແລະການຮ່ວມມື ລະຫວ່າງອົງການ ພັກ, ລັດ, ສະພາ, ອົງການຈັດຕັ້ງມະຫາຊົນ ແລະ ທ້ອງຖິ່ນ ຂອງທັງສອງປະເທດຕື່ມອີກກ້າວ ໜຶ່ງ, ລົງເລິກການແລກປ່ຽນ ທາງດ້ານທິດສະດີ ແລະ ບົດຮຽນໃນການກໍ່ສ້າງພັກ ແລະ ການປົກຄອງ ປະເທດ.

4/. ທັງສອງຝ່າຍ ໃຫ້ການຢືນຢັນຢ່າງເຕັມສ່ວນ ຕໍ່ຜົນການຄືບໜ້າຂອງການຮ່ວມມືດ້ານ ເສດຖະກິດ-ການຄ້າ ລະຫວ່າງສອງປະເທດ, ພ້ອມທັງເຫັນເປັນເອກະພາບນຳກັນວ່າ, ຈະສືບຕໍ່ ຂຸດຄົ້ນຄວາມອາດສາມາດບົ່ມຊ້ອນ ເພື່ອຊຸກຍູ້ໃຫ້ການຮ່ວມມືທີ່ຕ່າງຝ່າຍຕ່າງໄດ້ຮັບ ຜົນປະໂຫຍດ ໃນຂົງເຂດເສດຖະກິດ-ການຄ້າ, ບໍ່ແຮ່, ກະສິກຳ, ການທ່ອງທ່ຽວ ແລະ ອື່ນໆ ໃຫ້ຂະຫຍາຍຕົວຢ່າງບໍ່ ຢຸດຢັ້ງ. ທັງສອງຝ່າຍກັນວ່າ, ຈະສືບຕໍ່ເພີ່ມທະວີ ການຊີ້ນຳ ແລະການ ປະສານງານ ໃນການຮ່ວມມືດ້ານ ເສດຖະກິດ-ການຄ້າ, ການສະໜັບສະໜູນ ແລະ ລະດົມ ນັກທຸລະກິດຂອງທັງສອງຝ່າຍ ດຳເນີນການ ລົງທຶນເຊິ່ງກັນແລະກັນ, ດຳເນີນການພົວພັນ ທີ່ ສະໜິດແໜ້ນ ແລະ ການຮ່ວມມືທີ່ຕ່າງຝ່າຍຕ່າງມີຜົນ ປະໂຫຍດ. ຕັ້ງໜ້າຊອກຄົ້ນຊ່ອງທາງໃໝ່ ເພື່ອເປີດກວ້າງການຄ້າ ລະຫວ່າງສອງຝ່າຍ, ເປີດກວ້າງ ການຄ້າຊາຍແດນລະຫວ່າງສອງ ປະເທດ. ທັງສອງຝ່າຍຍັງໄດ້ລົງນາມໃນສັນຍາ ຂອບ ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະ ລັດ ປະຊາຊົນຈີນ ວ່າດ້ວຍ ສປ ຈີນສະໜອງເງິນກູ້ດອກເບ້ຍຕ່ຳໃຫ່ແກ່ລາວ, ສານແລກປ່ຽນກ່ຽວກັບ ໂຄງການທີ່ລັດຖະບານຈີນ ສະໜອງເຄື່ອງອຸປະກອນກົນຈັກການກະເສດ ໃຫ້ແກ່ ລັດຖະບານລາວ ແລະສານແລກປ່ຽນ ກ່ຽວກັບລັດຖະບານຈີນຈັດຊຸດເຝິກອົບຮົມພັກນັງານພັກ, ລັດຂອງລັດຖະບານ ລາວ

5/. ທັງສອງຝ່າຍໄດ້ສະແດງວ່າ, ຈະສືບຕໍ່ເພີ່ມທະວີການແລກປ່ຽນ ແລະ ການຮ່ວມມືໃນ ຂົງເຂດປ້ອງກັນຊາດ,ປ້ອງກັນຄວາມສະຫງົບ,ຍຸຕິທຳ, ວັດທະນະທຳ, ສຶກສາ, ສາທາລະນະສຸກ, ກິລາ ແລະ ອື່ນໆ ລະຫວ່າງສອງປະເທດ. ໂດຍຜ່ານການແລກປ່ຽນຄະນະຜູ້ແທນຢ້ຽມຢາມ ເຊິ່ງກັນແລະກັນ ເພື່ອເພີ່ມທະວີມິດຕະພາບ ລະຫວ່າງປະຊາຊົນຂອງທັງສອງປະເທດຕື່ມອີກ ກ້າວໜຶ່ງ, ເພີ່ມທະວີຄວາມ ເຂົ້າອົກເຂົ້າໃຈກັນແລະຄວາມໄວ້ເນື້ອເຊື່ອໃຈກັນລະຫວ່າງຊາວໜຸ່ມ ຂອງທັງສອງປະເທດ ເພື່ອສ້າງຜູ້ສືບທອດພາລະກິດມິດຕະພາບ ລະຫວ່າງ ລາວ ແລະ ຈີນ.

6/. ຝ່າຍຈີນຢືນຢັນເຄົາລົບນັບຖືເອກະລາດ, ອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງລາວ, ສະໜັບສະໜູນພັກ, ລັດ ແລະປະຊາຊົນລາວ ໃນການຍຶດໝັ້ນທິດສັງຄົມນິຍົມ, ແນວທາງປ່ຽນແປງໃໝ່

ແລະ ເປີດ ປະຕູ ແລະ ຄວາມພະຍາຍາມເພື່ອພັດທະນາເສດຖະກິດ ແລະ ປົກປ້ອງຄວາມໝັ້ນທ່ຽງຂອງສັງຄົມ. ຝ່າຍລາວ ຢືນຢັນເດັດດ່ຽວຍຶດໝັ້ນນະໂຍບາຍ ປະເທດຈີນດຽວ, ຄັດຄ້ານທຸກເຈດຈຳນົງເພື່ອສ້າງ"ສອງປະເທດຈີນ" ຫຼື " ໜຶ່ງຈີນໜຶ່ງໄຕ້ຫວັນ", ສະໜັບສະໜູນພາລະກິດທ້ອນໂຮມປະເທດໂດຍສັນຕິວິທີຂອງຈີນ.

7/. ທັງສອງຝ່າຍ ໃຫ້ການຕີລາຄາສູງຕໍ່ການຮ່ວມມືທີ່ມີປະສິດທິຜົນ ລະຫວ່າງສອງປະເທດໃນກິດຈະການສາກົນ ແລະ ພາກພື້ນ, ພ້ອມທັງຢືນຢັນຈະສືບຕໍ່ເພີ່ມທະວີການຮ່ວມມື ໃນຂອບອາຊຽນ, ເວທີສົນທະນາພາກ ພື້ນອາຊຽນ, ການພັດທະນາອານຸພາກພື້ນແມ່ນ້ຳຂອງ, ກອງປະຊຸມບໍ່ເປັນທາງການຂອງຜູ້ນຳອາຊີຕາເວັນອອກ, ສະຫະປະຊາຊາດ ແລະໃນຂອບຫຼາຍຝ່າຍອື່ນໆ, ຮັກສາການປະສານງານ ແລະ ການປະສານສົມທົບກັນຢ່າງ ແໜ້ນແຟ້ນ ໃນກິດຈະການພາກພື້ນ ແລະ ສາກົນ.

8/. ທ່ານ ຈູມມະລີ ໄຊຍະສອນ, ເລຂາທິການໃຫຍ່ ພັກປະຊາຊົນປະຕິວັດລາວ, ປະທານປະເທດແຫ່ງ ສປປ ລາວ ທັງໃນນາມສ່ວນຕົວ ກໍ່ຄື ຕາງໜ້າໃຫ້ແກ່ ພັກປະຊາຊົນປະຕິວັດລາວ ແລະ ລັດຖະບານ ສປປ ລາວ ໄດ້ສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈ ຕໍ່ການຕ້ອນຮັບ ອັນອົບອຸ່ນ ແລະ ຄຶກຄື້ນຕະຫຼອດໄລຍະການ ຢ້ຽມຢາມ ຂອງ ທ່ານ ຮູ ຈິນທາວ, ເລຂາທິການ ໃຫຍ່ພັກກອມມູນິດຈີນ, ປະທານປະເທດ ແຫ່ງ ສປ ຈີນ ກໍ່ຄືພັກ ກອມມູນິດ, ລັດຖະບານ ແລະ ປະຊາຊົນຈີນ. ພ້ອມທັງໄດ້ເຊື້ອເຊີນ ທ່ານ ເລຂາທິການໃຫຍ່, ປະທານປະເທດ ຮູ ຈິນທາວ ມາຢ້ຽມຢາມ ສປປ ລາວ, ເຊິ່ງ ທ່ານ ຮູ ຈິນທາວ, ເລຂາທິການໃຫຍ່ ພັກກອມມູນິດຈີນ, ປະທານປະເທດແຫ່ງ ສປ ຈີນ ກໍ່ໄດ້ຮັບເອົາການເຊື້ອເຊີນດ້ວຍຄວາມດີໃຈ.

ນະຄອນຫຼວງປັກກິ່ງ, ວັນທີ 30 ມິຖຸນາ 2006